ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ 176 /ບທວລ

ນະຄອນຫຼວງວຽງຈັນ, ວັນທີ 20 NOV 2026

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;
ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;
ທ່ານ ຜູ້ຖືຮຸ້ນ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມວິສາມັນສະພາບໍລິຫານ ຄັ້ງທີ 3 ປີ 2026

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບເລກທີ 15/ສສຄ ລົງວັນທີ 11 ທັນວາ ປີ 2024.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ ຕລຊລ, ລົງວັນທີ 27 ກັນຍາ 2018.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ (ບທວລ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມວິສາມັນສະພາບໍລິຫານ ຄັ້ງທີ 03 ປີ 2026 ເຊິ່ງຈັດຂຶ້ນໃນວັນທີ 20 ພະຈິກ 2026 ເວລາ 13:30 ໂມງຢູ່ສຳນັກງານກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

1. ພິຈາລະນາ ແລະ ຮັບຮອງ ການເພີ່ມທຶນຈົດທະບຽນ ແລະ ຂາຮຸ້ນ ຂອງບໍລິສັດ ພັດທະນາ ຊັບພະຍາກອນບໍ່ແຮ່ລາວ ຈຳກັດຜູ້ດຽວ.
2. ພິຈາລະນາ ແລະ ຮັບຮອງການສະເໜີຂໍຍົກເວັ້ນອາກອນຕ້ອງມອບໃນໄລຍະດຳເນີນທຸລະກິດ ຂອງບໍລິສັດ ຊີມັງລາວ ມະຫາຊົນ.
3. ພິຈາລະນາ ແລະ ຮັບຮອງການຢຸດຕິໂຄງການຂອກຄົ້ນ ແລະ ສຳຫຼວດຖ່ານຫີນຄອນພຸກ ເມືອງ ຫີນເຫີບ, ແຂວງວຽງຈັນ.

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ.

ຮອງປະທານສະພາບໍລິຫານບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company

ວັນທອງ ສິດທິກຸນ